ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື ເລກທີ...13.../ຈຂ,ອປ

ອັດຕະປື, ວັນທີ02 ຕຸ.ລາ.2017

# ຄຳສັ່ງ

## ວ່າດ້ວຍການ ກວາດລ້າງຂະບວນການ
## ລັກລອບຂຸດຄົ້ນຄຳ ຜິດກົດໝາຍ ໃນຂອບເຂດແຂວງອັດຕະປື

ເຖິງ: ພະແນກການ, ອົງການ ອ້ອມຂ້າງແຂວງ ແລະ ອົງການປົກຄອງເມືອງ 5 ຕົວເມືອງ.

- ອີງຕາມ ກົດໝາຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ.
- ອີງຕາມ ມະຕິກອງປະຊຸມຂອງຄະນະປະຈຳພັກແຂວງ ຮ່ວມກັບ ຄະນະ ປກຊ-ປກສຂັ້ນແຂວງ ຄັ້ງວັນທີ 5 ກັນຍາ 2017.

ໃນໄລຍະຜ່ານມາທາງແຂວງໄດ້ອອກຄຳສັ່ງຢຸດຕິການດຳເນີນການຂຸດຄົ້ນຄຳທັງໝົດ,ນຳໃຊ້ກຳລັງໄປກວາດລ້າງສຳເລັດຜົນເປັນຢ່າງດີ. ປະຈຸບັນເກີດມີໝໍ່ແໜງການລັກລອບຂຸດຄົ້ນຄຳ ຂອງປະຊາຊົນ, ບຸກຄົນ ທີ່ມີພາຫານະກົນຈັກ ຢູ່ຕາມລຳຫ້ວຍຕ່າງໆ ທີ່ສວຍໂອກາດ ແອບອ້າງບໍລິສັດ, ເຊິ່ງທາງແຂວງບໍ່ສາມາດຮັບຮູ້ເປັນອັນແນ່ນອນ, ຂະບວນການດັ່ງກ່າວໄດ້ສ້າງຄວາມບໍ່ສະຫງົບ, ປັ່ນປ່ວນພາຍໃນແຂວງ, ສະນັ້ນ ເພື່ອສະກັດກັ້ນການລັກລອບບໍ່ໃຫ້ຄຸມເຄືອ ແລະ ແຜ່ລາມຕໍ່ໄປ.

### ເຈົ້າແຂວງອອກຄຳສັ່ງດັ່ງນີ້:

1. ມອບໃຫ້ກອງບັນຊາການທະຫານແຂວງ ສົມທົບກັບ ປກສ ແຂວງ, ພະແນກພະລັງງານ ແລະ ບໍ່ແຮ່ ແລະ ເມືອງ ຊານໄຊ, ເມືອງ ພູວົງ ດຳເນີນການກວາດລ້າງ, ແກ້ໄຂ ແລະ ຢຸດຕິຂາດຕົວ ຂອງ ບັນດາບຸກຄົນ, ກຸ່ມຄົນ, ບໍລິສັດ ແລະ ຜູ້ປະກອບການອື່ນໆ ທີ່ເຄື່ອນໄຫວ ສຳຫຼວດ, ຊອກຄົ້ນ ແລະ ຂຸດຄົ້ນແຮ່ທາດຕ່າງໆ ໃນຂອບເຂດວັງຕັດ , ເມືອງຊານໄຊ ແລະ ເຂດນ້ຳຊອນ, ເມືອງ ພູວົງ(ນັບທັງຜູ້ເຮັດສັນຍາ, ແອບອ້າງ ແລະ ດຳເນີນໂດຍກົງ)ທີ່ບໍ່ໄດ້ຮັບອະນຸຍາດຈາກລັດຖະບານ,ໃຫ້ສຳເລັດໃນເດືອນ 11/2017.
2. ມອບໃຫ້ ພະແນກພະລັງງານ ແລະ ບໍ່ແຮ່ ສົມທົບກັບກອງເລຂາ ຄລທ ຂັ້ນແຂວງ (ພະແນກແຜນການ ແລະ ການລົງທຶນ) ກວດກາຄືນ ຕາມບົດບັນທຶກ, ສັນຍາ, ຂໍ້ຕົກລົງ ຫຼື ນິຕິກຳຕ່າງໆ ທີ່ລັດຖະບານ ຫຼື ກະຊວງ,ຂະແໜງການຂັ້ນສູນກາງ ແລະ ແຂວງອອກອະນຸຍາດໃຫ້; ຖ້າເຫັນວ່າອັນໃດບໍ່ສອດຄ່ອງກັບລະບຽບກົດໝາຍ ແມ່ນໃຫ້ສະເໜີຄືນ ເພື່ອຂໍລົບລ້າງເອກະສານດັ່ງກ່າວ; ໃນນີ້ ໃຫ້ສົມທົບກັບບັນດາບໍລິສັດທີ່ໄດ້ຮັບອະນຸຍາດ ເຮັດບັນຊີລະອຽດບັນດາບໍລິສັດລູກ, ບໍລິສັດຂາຮຸ້ນ, ບໍລິສັດສັນຍາຕໍ່(sub-contract), ບໍລິສັດຄູ່ຮ່ວມມືພາຍນອກ ຫຼື ຄູ່ສັນຍາອື່ນໆ ເຊັ່ນ: ຜູ້ສະໜອງນ້ຳມັນ, ອາຫານ, ອຸປະກອນອາໄລ່, ການຕະຫຼາດ ແລະ ອື່ນໆ ມີຈຳນວນເທົ່າໃດ?,

ເບື້ອງລັດໃຜເປັນຜູ້ອະນຸມັດ; ຈຳນວນພົນເທົ່າໃດ?, (ພາຍໃນເທົ່າໃດ? ແລະ ຕ່າງປະເທດເທົ່າໃດ?) ແລະ ໃຫ້ເຄື່ອນໄຫວດ້ານໃດແດ່, ອອກບັດແຮງງານແທ້ເທົ່າໃດ?.

- ກວດເບິ່ງບົດວິພາກເສດຖະກິດ-ເຕັກນິກ ແລະ ການນຳໃຊ້ຕົວຈິງ; ຖ້າເຫັນວ່າບໍ່ຖືກຕ້ອງຕາມສັນຍາ ແລະ ມາດຖານທີ່ໄດ້ຮັບຮອງ ແມ່ນໃຫ້ຢຸດຕິທັນທີ, ໂດຍສະເພາະເຄື່ອງຮ່ອນຄຳຂະໜາດນ້ອຍຂອງຄອບຄົວ, ເຄື່ອງຈັກສະຕິມຕັດໄມ້, ໂຮງຊອຍ, ໃບເລື່ອຍ ແລະ ເຄື່ອງມື ອຸປະກອນອື່ນໆທີ່ບໍ່ຖືກຕ້ອງ ແມ່ນຢຸດຕິ ແລະ ຢຶດທັນທີ ແລ້ວລາຍງານໃຫ້ເຈົ້າແຂວງດ່ວນ ເພື່ອຂໍອະນຸມັດດຳເນີນຄະດີຕໍ່ຜູ້ກະທຳຜິດ.

- ສຳລັບງົບປະມານຮັບໃຊ້ໃນການເຄື່ອນໄຫວວຽກດັ່ງກ່າວ ແມ່ນໃຫ້ນຳໃຊ້ບ້ວງເງິນຄຸ້ມຄອງໂຄງການທີ່ທາງບໍລິສັດຈັດສັນໃຫ້ຕາມສັນຍາ, ແຂວງຈະປະກອບສ່ວນຕື່ມໃຫ້ຈຳນວນໜຶ່ງ.

3. ມອບໃຫ້ຫ້ອງການ ປກຊ-ປກສແຂວງ ປະສານງານ ແລະ ຕິດຕາມ ບັນດາເປົ້າໝາຍຕ່າງໆ(ຜູ້ທີ່ກ່ຽວຂ້ອງ) ເພື່ອສະຫຼຸບລາຍງານໃຫ້ ຄະນະປະຈຳພັກແຂວງ, ເຈົ້າແຂວງ-ຮອງເຈົ້າແຂວງຮັບຊາບເປັນແຕ່ລະໄລຍະ ເພື່ອມີທິດຊີ້ນຳໃນການແກ້ໄຂ, ມອບໃຫ້ຄະນະກວດກາພັກ-ພະແນກກວດກາລັດ ຕິດຕາມກວດກາການປະຕິບັດໜ້າທີ່ ຂອງຄະນະດັ່ງກ່າວ ແລະ ສະເໜີທິດແກ້ໄຂຖ້າເຫັນວ່າມີຄວາມຈຳເປັນ.

4. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການຕ່າງໆທີ່ໄດ້ອອກໃນໄລຍະຜ່ານມາ ທີ່ມີເນື້ອໃນຂັດກັບຄຳສັ່ງສະບັບນີ້ລ້ອນແຕ່ຖືກຍົກເລີກ.

ບ່ອນສົ່ງ:

| | |
|---|---|
| - ຄະນະປະຈຳພັກແຂວງ ທ່ານ ລະ | 1 ສະບັບ. |
| - ຫ້ອງວ່າການແຂວງ | 1 ສະບັບ. |
| - ພະແນກພະລັງງານ ແລະ ບໍ່ແຮ່ | 1 ສະບັບ. |
| - ກອງບັນຊາການທະຫານ ແຂວງ | 1 ສະບັບ. |
| - ກອງບັນຊາການ ປກສ ແຂວງ | 1 ສະບັບ. |
| - ຫ້ງການ ປກສ-ປກຊ ແຂວງ | 1 ສະບັບ. |
| - ຫ້ອງວ່າການປົກຄອງເມືອງ ເມືອງລະ | 1 ສະບັບ. |
| - ເກັບມ້ຽນ | 1 ສະບັບ. |

**ເຈົ້າແຂວງ**

ແຂວງອັດຕະປື

ປອ ບານ ວັນຍະນາດ